ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1237/ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 23 JUN 2015

# ຂໍ້ຕົກລົງ
# ວ່າດ້ວຍ ການນຳເຂົ້າເພື່ອສົ່ງອອກຕໍ່ ແລະ ການສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງ

- ອີງຕາມດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມດຳລັດວ່າດ້ວຍ ການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011;
- ອີງຕາມດຳລັດວ່າດ້ວຍ ຂັ້ນຕອນການອອກໃບອະນຸຍາດນຳເຂົ້າສິນຄ້າ ສະບັບເລກທີ 180/ນຍ, ລົງວັນທີ 07 ກໍລະກົດ 2009.

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການນຳເຂົ້າ ເພື່ອສົ່ງອອກຕໍ່ ແລະ ການສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງ ຂອງ ສປປ ລາວ ເພື່ອອຳນວຍຄວາມສະດວກ ແກ່ການນຳເຂົ້າ-ສົ່ງອອກສິນຄ້າດັ່ງກ່າວ ແລະ ດຳເນີນການເຄື່ອນຍ້າຍໂດຍຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ແນໃສ່ສົ່ງເສີມການພັດທະນາວຽກງານອຸດສາຫະກຳ ແລະ ການຄ້າ ປະກອບສ່ວນແກ່ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

### ມາດຕາ 2 ການນຳເຂົ້າເພື່ອສົ່ງອອກຕໍ່ ແລະ ການສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງ

ການນຳເຂົ້າສິນຄ້າຄຸ້ມຄອງເພື່ອສົ່ງອອກຕໍ່ ແມ່ນການນຳເຂົ້າສິນຄ້າທີ່ນອນໃນລາຍການສິນຄ້າຄຸ້ມຄອງ ເພື່ອປຸງແຕ່ງ ຫຼື ບໍ່ມີການປຸງແຕ່ງ ຢູ່ ສປປ ລາວ ແລ້ວສົ່ງອອກຕໍ່ ຊຶ່ງປະກອບມີ ການນຳເຂົ້າວັດຖຸດິບ ຫຼື ຜະລິດຕະພັນເຄິ່ງສຳເລັດຮູບ ເພື່ອຜ່ານຂະບວນການຜະລິດ ຢູ່ ສປປ ລາວ ແລ້ວສົ່ງອອກຕໍ່; ການນຳເຂົ້າສິນຄ້າສຳເລັດຮູບ ເຂົ້າມາຈັດເກັບໄວ້ໃນສາງສິນຄ້າໄລຍະໜຶ່ງ ຫຼື ຄັດແຍກ ແລ້ວສົ່ງອອກຕໍ່, ບໍ່ໄດ້ຈຳໜ່າຍ ຢູ່ ສປປ ລາວ.

ການສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງ ແມ່ນການສົ່ງອອກສິນຄ້າຄຸ້ມຄອງ ຈາກ ສປປ ລາວ ຫາ ປະເທດໃດໜຶ່ງ ເພື່ອນຳໄປວາງສະແດງ, ທົດລອງ, ຄົ້ນຄວ້າ, ວິໄຈ, ສ້ອມແປງ ແລະ ອື່ນໆ ແລ້ວນຳເຂົ້າມາ ສປປ ລາວ ຄືນ, ບໍ່ໄດ້ນຳໄປຈຳໜ່າຍ ຫຼື ມອບໂອນ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ສິນຄ້າຄຸ້ມຄອງ** ໝາຍເຖິງ ສິນຄ້າທີ່ນອນຢູ່ໃນ ລາຍການສິນຄ້າ ທີ່ຕ້ອງຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ແບບອັດຕະໂນມັດ ແລະ ແບບບໍ່ອັດຕະໂນມັດ.
2. **ໃບອະນຸຍາດນຳເຂົ້າເພື່ອສົ່ງອອກຕໍ່ ຫຼື ສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງ** ໝາຍເຖິງ ເອກະສານຢັ້ງຢືນເຫັນດີໃຫ້ສົ່ງອອກຕໍ່ ຫຼື ສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງ ໂດຍຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ສາມາດນຳໃຊ້ໄດ້ຕາມກຳນົດເວລາທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ ແລະ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນ ການນຳເຂົ້າສິນຄ້າຄຸ້ມຄອງ ເຂົ້າມາ ສປປ ລາວ ເພື່ອສົ່ງອອກຕໍ່ ຫຼື ສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງຂອງ ສປປ ລາວ.

## ໝວດທີ 2
## ການອອກໃບອະນຸຍາດນຳເຂົ້າເພື່ອສົ່ງອອກຕໍ່ ແລະ ສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງ

**ມາດຕາ 5 ຜູ້ທີ່ມີເງື່ອນໄຂໃນການນຳເຂົ້າເພື່ອສົ່ງອອກຕໍ່ ແລະ ສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງ**

ຜູ້ທີ່ມີເງື່ອນໄຂໃນການນຳເຂົ້າເພື່ອສົ່ງອອກຕໍ່ ຫຼື ສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງ ແມ່ນຫົວໜ່ວຍທຸລະກິດ ທີ່ຂື້ນທະບຽນວິສາຫະກິດ ໃນການດຳເນີນທຸລະກິດຂາອອກ-ຂາເຂົ້າ, ທຸລະກິດສົ່ງອອກຕໍ່, ແລະທຸລະກິດນຳເຂົ້າ ຕາມປະເພດທຸລະກິດທີ່ໄດ້ລະບຸໄວ້ໃນໃບທະບຽນວິສາຫະກິດ ຢູ່ ສປປ ລາວ.

**ມາດຕາ 6 ການປະກອບເອກະສານ**

ຜູ້ດຳເນີນການນຳເຂົ້າເພື່ອສົ່ງອອກຕໍ່ ແລະ ສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງ ຢູ່ ສປປ ລາວ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າເພື່ອສົ່ງອອກຕໍ່ ຫຼື ສົ່ງອອກຊົ່ວຄາວສິນຄ້າຄຸ້ມຄອງ;
2. ສັນຍາຊື້-ຂາຍສິນຄ້າ ລະຫວ່າງ ຜູ້ຂາຍສິນຄ້າຢູ່ປະເທດຕົ້ນທາງ ຫຼື ຜູ້ຊື້ສິນຄ້າຢູ່ປະເທດປາຍທາງ ແລະ ຫົວໜ່ວຍທຸລະກິດທີ່ຂື້ນທະບຽນວິສາຫະກິດຢູ່ ສປປ ລາວ;
3. ໃບທະບຽນວິສາຫະກິດ ທີ່ຂື້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5;